# ອຳນາດຈຳກັດຂອງທະນາຍຄວາມສຳລັບ ສະວັດດີການ WA Cares Fund

**Limited Power of Attorney for WA Cares Fund Benefits**

| ຊື່ຂອງຜູ້ໄດ້ຮັບຜົນປະໂຍດ |
| --- |
| ເລກ WA Cares ID (ຖ້າຮູ້ຈັກ) |

## ອຳນາດຂອງທະນາຍຄວາມຈຳກັດແມ່ນຫຍັງສຳລັບສະວັດດີການ WA Cares Fund?

WA Cares Fund ແມ່ນໂຄງການການບໍລິການແລະການອູ້ມຊູຣະຍະຍາວທີ່ຖືກກໍ່ຕັ້ງຂຶ້ນມາພາຍໃຕ້ມາຕຣາ 50B.04 RCW. ໃບຟອມອຳນາດຂອງທະນາຍຄວາມຈຳກັດສຳລັບສະວັດດີການ WA Cares Fund ເປັນເອກສານຕາມກົດຫມາຍທີ່ອະນຸຍາດໃຫ້ຄົນໃດຄົນນຶ່ງທີ່ທ່ານເລືອກເອົາເພື່ອຈະປະຕິບັດຕົນໃນນາມຂອງທ່ານແລະທຳການຕັດສິນໃຈກ່ຽວກັບສະວັດດີການ WA Cares ຂອງທ່ານ,ຕາມທີ່ຖືກບໍລິຫານພາຍໃຕ້ມາດຕຣາ 50B.04 RCW, ລວມທັງການຕັດສິນໃຈທີ່ຖືກເຮັດນຳກົມ Department of Social and Health Services ແລະກົມ Employment Security Department. ຢູ່ໃນໃບສັນຍາອຳນາດຂອງທະນາຍຄວາມ,ຄົນສຳຄັນແມ່ນບຸກຄົນຜູ້ທີ່ອະນຸມັດອຳນາດຂອງທະນາຍຄວາມໃຫ້,ໃນຂະນະທີ່ບຸກຄົນຜູ້ທີ່ກຳລັງໄດ້ຮັບອຳນາດນັ້ນໄດ້ຖືກເອີ້ນວ່າຕົວແທນຫລືທະນາຍຄວາມ.ໃບຟອມໃບນີ້ຈະຖືກແລກປ່ຽນກັນນຳ Employment Security Department.

## ຂ້າພະເຈົ້າຕ້ອງໄດ້ຂຽນປະກອບໃບຟອມອຳນາດຂອງທະນາຍຄວາມຈຳກັດສຳລັບສະວັດດີການ WA Cares Fund ບໍ່?

ທ່ານບໍ່ໄດ້ຖືກບັງໃຫ້ຕ້ອງມີອຳນາດຂອງທະນາຍຄວາມ.ທ່ານບໍ່ໄດ້ຖືກບັງໃຫ້ໃຊ້ໃບຟອມໃບນີ້ເພື່ອຈະເຮັດເຮັດສັນຍາອຳນາດຂອງທະນາຍຄວາມອອກມາ.ການຂຽນປະກອບໃບຟອມໃບນີ້ແມ່ນຕາມສະມັກໃຈແລະອາດຈະຖືກຍົກເລີກໄດ້ໃນທຸກໆເວລາ.

## ຈະເຮັດແນວໃດຖ້າຫາກວ່າຂ້າພະເຈົ້າມີອຳນາດຂອງທະນາຍຄວາມແລ້ວ?

ຖ້າຫາກວ່າທ່ານມີອຳນາດຂອງທະນາຍຄວາມແລ້ວ,ທ່ານສາມາດກວດເບິ່ງເອກສານນັ້ນຄືນເພື່ອຈະພິຈາຣະນາເບິ່ງວ່າມັນເອົາສິດອຳນາດໃຫ້ຕົວແທນຂອງທ່ານຫລືບໍ່,ສິດອຳນາດທີ່ຈະປະຕິບັດຕົວໃນນາມຂອງທ່ານແລະທຳການຕັດສິນໃຈກ່ຽວກັບສະວັດດີການ WA Cares ຂອງທ່ານ. ຖ້າແມ່ນ,ທ່ານຈະເອົາໂກປີໃຫ້ WA Cares. WA Cares ຕ້ອງມີໂກປີໃບນຶ່ງຢູ່ໃນສຳນວນເພື່ອວ່າຕົວແທນຫລືທະນາຍຄວາມຂອງທ່ານເພື່ອຈະຄວບຄຸມເບິ່ງນຳສະວັດດີການຂອງທ່ານໃນນາມຂອງທ່ານ.

## ຈະເຮັດແນວໃດຖ້າຫາກວ່າຂ້າພະເຈົ້າມີຄຳຖາມກ່ຽວກັບການໃຊ້ອຳນາດຂອງທະນາຍຄວາມ?

**ການປະຕິເສດຄວາມຮັບຜິດຊອບ:** ພະນັກງານຂອງ WA Cares ບໍ່ສາມາດສະເນີໃຫ້ຄຳແນະນຳທາງກົດຫມາຍຫລືຕອບຄຳຖາມກ່ຽວກັບວ່າຈະຂຽນປະກອບໃບຟອມໃບນີ້ໄດ້ແນວໃດ.ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບວ່າຈະເຮັດສັນຍາອຳນາດຂອງທະນາຍຄວາມຫລືບໍ່ຫລືວ່າຈະເຮັດແນວໃດ,ທ່ານຄວນຈະປຶກສານຳທະນາຍຄວາມ.

ຣາຍຣະອຽດເພີ້ມເຕີມແລະແຫລ່ງຊ່ວຍເຫລືອທາງກົດຫມາຍຈະມີໄວ້ໃຫ້ໂດຍຜ່ານ Northwest Justice Project.

**ແວບໄຊທ໌:** www.nwjustice.org **ໂທຣະສັບ:** 1-888-201-1012

| ຍື່ນຟອມໃບນີ້: | ຕ້ອງການທີ່ຈະໃຊ້ການ POA ໃບນີ້: |
| --- | --- |
| **ອັບໂຫລດ:** ທ່ານຈະອັບໂຫລດໃບຟອມທີ່ຖືກຂຽນປະກອບແລ້ວໃສ່ບັນຊີ WA Cares ອອນລາຍນ໌ຂອງທ່ານ.<br><br>**ສົ່ງທາງໄປສະນີໄປທີ່:**<br>DSHS<br>The WA Cares Fund<br>PO Box 45612<br>Olympia, WA 98504-5612<br><br>ຕິດຕໍ່ຫາ WA Cares ເພື່ອຣາຍຣະອຽດເພີ້ມເຕີມ:<br>**ໂທຫາ:** 844-CARE4WA (1-844-227-3492)<br>**ແວ່ປ໌ຣູນ:** www.wacaresfund.wa.gov | ເພື່ອຈະໃຊ້ໃບຟອມໂດຍການສອດຄ່ອງນຳ: RCW 11.125.050.<br>• ຊື່ເຕັມຂອງທ່ານ<br>• ພະຍານສອງຄົນຫລືຜູ້ປັ້ງປືນລາຍເຊັນ<br><br>**ຣາຍຣະອຽດທີ່ WA Cares ຈະຕ້ອງການ:**<br>• ທີ່ຢູ່ຖະນົນຂອງທ່ານ<br>• ເລກໂທຣະສັບຂອງທ່ານ<br>• ເລກ WA Cares ID ຂອງທ່ານ (ຖ້າຮູ້ຈັກ)<br>• ຊື່ຕາມກົດຫມາຍແລະຣາຍຣະອຽດຕິດຕໍ່ຫາຂອງຕົວແທນ<br><br>**ການຊ່ວຍເຫລືອດ້ານການແປພາສາຈະມີໄວ້ໃຫ້:**<br>• ການບໍລິການນາຍແປພາສາ<br>• ການບໍລິການພາສາໃບ້<br>• ຫນັງສືຄົນຕາບອດ<br>• ຜູ້ໃຊ້ TTY/TDD ບີບຫາເລກ 1-800-833-6384 |



Barcode Label Here

# ອຳນາດຈຳກັດຂອງທະນາຍຄວາມສຳລັບ ສະວັດດີການ WA Cares Fund

**Limited Power of Attorney for WA Cares Fund Benefits**

| ຊື່ຂອງຜູ້ໄດ້ຮັບຜົນປະໂຍດ |
|---|
| ເລກ WA Cares ID (ຖ້າຮູ້ຈັກ) |

## ອຳນາດຈຳກັດຂອງທະນາຍຄວາມ

ສຳລັບ **Legal Name of Principal**____________________, **Date of Birth**_______________:

1. **ຕົວແທນ.** ຂ້າພະເຈົ້າເລືອກເອົາ **Legal Name of Agent**_______________, ໃຫ້ເປັນຕົວແທນຂອງຂ້າພະເຈົ້າທີ່ມີສິດອຳນາດທີ່ຈະຄວບຄຸມເບິ່ງນຳສະວັດດີການ WA Cares Fund ຂອງຂ້າພະເຈົ້າ.ສິດອຳນາດທີ່ຖືກອະນຸມັດໃຫ້ໂດຍເອກສານອັນນີ້ໃຫ້ບຸກຄົນທີ່ຖືກບົ່ງຊີ້ຢູ່ຂ້າງເທິງນີ້ແມ່ນຖືກຈຳກັດໃສ່ການຕັດສິນໃຈກ່ຽວກັບສະວັດດີການ WA Cares Fund ຂອງຂ້າພະເຈົ້າແລະບໍ່ແມ່ນສະວັດດີການຂອງຣາດຖະບານຢ່າງອື່ນໆ.
2. **ຕົວສຳລອງ (ຕາມສະມັກໃຈ) .** ຖ້າຫາກວ່າຕົວແທນທີ່ຖືກບົ່ງຊີ້ບໍ່ສາມາດຫລືບໍ່ຍິນດີທີ່ຈະປະຕິບັດຕົວ,ຂ້າພະເຈົ້າເລືອກເອົາ **Legal Name of Alternate Agent**_______________, ໃຫ້ເປັນຕົວແທນຂອງຂ້າພະເຈົ້າທີ່ມີສິດອຳນາດທີ່ຈະຄວບຄຸມເບິ່ງນຳສະວັດດີການ WA Cares Fund ຂອງຂ້າພະເຈົ້າ.
3. **ສິດທິຂອງຂ້າພະເຈົ້າ.** ຂ້າພະເຈົ້າຮັກສາສິດທິທຸກໆຢ່າງທີ່ຈະທຳການຕັດສິນໃຈສຳລັບຂ້າພະເຈົ້າເອງກ່ຽວກັບສະວັດດີການ WA Cares Fund ຂອງຂ້າພະເຈົ້າ,ບໍ່ກ່ຽວວ່າອຳນາດຂອງທະນາຍຄວາມອັນນີ້ຈະໃຊ້ການໄດ້ຢູ່ຫລືບໍ່,ຈົນກວ່າຂ້າພະເຈົ້າບໍ່ມີຄວາມສາມາດຕໍ່ໄປອີກແລ້ວທີ່ຈະເຮັດຢ່າງນັ້ນ.
4. **ການຍົກເລີກ.** ຂ້າພະເຈົ້າຍົກເລີກອຳນາດຈຳກັດຂອງທະນາຍຄວາມແນວອື່ນທຸກໆຢ່າງສຳລັບສະວັດດີການ WA Cares Fund ທີ່ຂ້າພະເຈົ້າໄດ້ເຊັນແລ້ວໃນຜ່ານມາ.ຂ້າພະເຈົ້າຈະຍົກເລີກອຳນາດຂອງທະນາຍຄວາມອັນນີ້ໄດ້ໃນທຸກໆເວລາ.
5. **ອຳນາດ.** ຕົວແທນຂອງຂ້າພະເຈົ້າຈະມີອຳນາດແລະສິດອະນຸຍາດເຕັມທີ່ທີ່ຈະຄວບຄຸມສະວັດດີການ WA Cares Fund ຂອງຂ້າພະເຈົ້າຢ່າງເຕັມທີ່ແລະມີຜົນໃຊ້ການໄດ້ຄືກັນກັບຂ້າພະເຈົ້າສາມາດເຮັດໄດ້ໂດຍຂ້າພະເຈົ້າເອງ,ລວມທັງ,ແຕ່ບໍ່ຈຳກັດໄປເຖິງ,ອຳນາດທີ່ຈະ:
   a) ຈົດຊື່ເຂົ້າໃສ່,ຮ້ອງຂໍເອົາ,ເລືອກເອົາ,ປະຕິເສດ,ປ່ຽນແປງ,ແກ້ໄຂ,ຫລືເຊົາຮັບເອົາສະວັດດີການ;
   b) ກະຕຽມ,ຍື່ນ,ແລະຮັກສາການທວງຂອງຜູ້ສຳຄັນສຳລັບສະວັດດີການ WA Cares Fund;
   c) ເລີ່ມຕົ້ນ,ເຂົ້າຮ່ວມໃນ,ຍື່ນການແກ້ໄຂຄວາມຂັດແຍ້ງສຳລອງ,ຕົກລົງກັນ,ຄັດຄ້ານ,ຫລືສະເນີຫລືຮັບເອົາການປະນີປະນອມດ້ວຍຄວາມນັບຖືໃສ່ການດຳເນີນຄະດີກ່ຽວກັບສະວັດດີການ WA Cares Fund ທຸກໆຢ່າງທີ່ຜູ້ສຳຄັນມີສິດທີ່ຈະໄດ້ຮັບພາຍໃຕ້ມາດຕຣາ 50B.04 RCW.
6. **ການເປີດເຜີຍ HIPAA.** ຂ້າພະເຈົ້າອະນຸຍາດໃຫ້ WA Cares Fund ທີ່ຈະເປີດເຜີຍຣາຍຣະອຽດທຸກໆຢ່າງທີ່ຄຸ້ມຄອງໂດຍ Health Insurance Portability and Accountability Act of 1996 (HIPAA) ທີ່ກ່ຽວຂ້ອງນຳການຄວບຄຸມຂອງສະວັດດີການ WA Cares ຂອງຂ້າພະເຈົ້າ,ໃຫ້ຕົວແທນຂອງຂ້າພະເຈົ້າ.
7. **ວັນທີເລີ້ມຕົ້ນ.** ອຳນາດຂອງທະນາຍຄວາມອັນນີ້ມີຜົນໃຊ້ການໄດ້ໃນວັນທີ່ທ່ານເຊັນມັນ.
8. **ວັນທີຈົບລົງ.** ອຳນາດຂອງທະນາຍຄວາມອັນນີ້ຈະຈົບລົງຖ້າຫາກວ່າຂ້າພະເຈົ້າຍົກເລີກມັນຫລືເມື່ອເວລາຂ້າພະເຈົ້າເສັຽຊີວິດ.
9. **ໃຊ້ໄດ້ຕະລອດໄປ (ຕາມສະມັກໃຈ) .** ☐ ໂດຍການໝາຍໃສ່ບອກນີ້,ຂ້າພະເຈົ້າຢັ້ງຢືນວ່າຂ້າພະເຈົ້າຕ້ອງການຢາກໃຫ້ຕົວແທນຂອງຂ້າພະເຈົ້າທີ່ຈະໃຊ້ອຳນາດຂອງທະນາຍຄວາມອັນນີ້ເພື່ອຈະຄວບຄຸມເບິ່ງນຳວຽກງານຂອງຂ້າພະເຈົ້າເຖິງແມ່ນວ່າຂ້າພະເຈົ້າຈະກາຍເປັນປ່ວຍ,ບາດເຈັບ,ຫລືບໍ່ສາມາດເຮັດວຽກໄດ້ຈະບໍ່ສະທ້ອນເຖິງອຳນາດຂອງທະນາຍຄວາມອັນນີ້.

**ຂ້າພະເຈົ້າໄດ້ອ່ານແລະເຂົ້າໃຈຣາຍຣະອຽດຂ້າງເທິງນີ້.**

| ລາຍເຊັນຂອງຂ້າພະເຈົ້າ (ຢູ່ຕໍ່ໜ້າຜູ້ຢັ້ງຢືນລາຍເຊັນຫລືພະຍານສອງຄົນ: | ວັນທີເຊັນຊື່ |
|---|---|
| | |



Barcode Label Here

ອຳນາດຈຳກັດຂອງທະນາຍຄວາມສຳລັບ
ສະວັດດີການ **WA Cares Fund**
**Limited Power of Attorney for WA Cares Fund Benefits**

| | |
|---|---|
| ຊື່ຂອງຜູ້ໄດ້ຮັບຜົນປະໂຫຍດ | |
| ເລກ WA Cares ID (ຖ້າຮູ້ຈັກ) | |

## ຄຳແຈ້ງການຂອງພະຍານ

### ພະຍານ 1

ໃນວັນທີ **Date**, **Legal Name of Principle**, ໄດ້ເຊັນຊື່ໃສ່ໃບອຳນາດຈຳກັດຂອງທະນາຍຄວາມອັນນີ້ສຳລັບສະວັດດີການ WA Cares Fund ຂອງຂ້າພະເຈົ້າຢູ່ໃນການປາກົດຕົວຂອງຂ້າພະເຈົ້າ.ຂ້າພະເຈົ້າຕົກລົງເຫັນພ້ອມທີ່ຈະເປັນພະຍານລາຍເຊັນຂອງເຂົາເຈົ້າຕາມຄຳຮ້ອງຂໍຂອງເຂົາເຈົ້າ.ຂ້າພະເຈົ້າບໍ່ມີຄວາມສຳພັນນຳບຸກຄົນນີ້ໂດຍທາງສາຍເລືອດ,ການແຕ່ງງານ,ຫລືຄວາມສຳພັນຢູ່ນຳກັນທີ່ໄດ້ລົງທະບຽນນຳຣັດ.ຂ້າພະເຈົ້າບໍ່ໃຫ້ການເບິ່ງແຍງດູແລບຸກຄົນນີ້ຢູ່ເຮືອນຫລືສະຖານທີ່ປິ່ນປົວຣະຍະຍາວ.

| | |
|---|---|
| ລາຍເຊັນ | ຊື່ຂອງພະຍານຂຽນເປັນຕົວພິມຄົນທີ 1 |
| ທີ່ຢູ່ | ເລກໂທະສັບ (ພ້ອມທັງຣະຫັດເຂດ) |

### ພະຍານ 2

ໃນວັນທີ **Date**, **Legal Name of Principle**, ໄດ້ເຊັນຊື່ໃສ່ໃບອຳນາດຈຳກັດຂອງທະນາຍຄວາມອັນນີ້ສຳລັບສະວັດດີການ WA Cares Fund ຂອງຂ້າພະເຈົ້າຢູ່ໃນການປາກົດຕົວຂອງຂ້າພະເຈົ້າ.ຂ້າພະເຈົ້າຕົກລົງເຫັນພ້ອມທີ່ຈະເປັນພະຍານລາຍເຊັນຂອງເຂົາເຈົ້າຕາມຄຳຮ້ອງຂໍຂອງເຂົາເຈົ້າ.ຂ້າພະເຈົ້າບໍ່ມີຄວາມສຳພັນນຳບຸກຄົນນີ້ໂດຍທາງສາຍເລືອດ,ການແຕ່ງງານ,ຫລືຄວາມສຳພັນຢູ່ນຳກັນທີ່ໄດ້ລົງທະບຽນນຳຣັດ.ຂ້າພະເຈົ້າບໍ່ໃຫ້ການເບິ່ງແຍງດູແລບຸກຄົນນີ້ຢູ່ເຮືອນຫລືສະຖານທີ່ປິ່ນປົວຣະຍະຍາວ.

| | |
|---|---|
| ລາຍເຊັນ | ຊື່ຂອງພະຍານຂຽນເປັນຕົວພິມຄົນທີ 2 |
| ທີ່ຢູ່ | ເລກໂທະສັບ (ພ້ອມທັງຣະຫັດເຂດ) |

## ໃບຢັ້ງຢືນຂອງການຮັບຮູ້ (ຖືກຂຽນປະກອບໂດຍຜູ້ຢັ້ງຢືນລາຍເຊັນ)

ຣັດຂອງ ______________________

ຄາວຕີຂອງ ______________________

ຖືກເຊັນຊື່ຂອງຫນ້າຂ້າພະເຈົ້າໃນວັນທີ **Date** ໂດຍ **Legal Name of Principal**.

______________________
ລາຍເຊັນຂອງຜູ້ຢັ້ງຢືນລາຍເຊັນ

______________________
ວັນທີຫມົດອາຍຸຂອງອຳນາດຫນ້າທີ່



Barcode Label Here

# ອຳນາດຈຳກັດຂອງທະນາຍຄວາມສຳລັບ ສະວັດດີການ WA Cares Fund
**Limited Power of Attorney for WA Cares Fund Benefits**

| ຊື່ຂອງຜູ້ໄດ້ຮັບຜົນປະໂຍດ |
|---|
| ເລກ WA Cares ID (ຖ້າຮູ້ຈັກ) |

**ຄັດມານຳ: ລາຍລະອຽດການຕິດຕໍ່**

ລາຍລະອຽດການຕິດຕໍ່ອັນນີ້ແມ່ນບໍ່ຕ້ອງມີກໍໄດ້ເພື່ອຈະໃຊ້ສັນຍາຕົກລົງອຳນາດຂອງທະນາຍຄວາມແຕ່ວ່າຕ້ອງການໃຫ້ມີໂດຍ WA Cares. ເອົາລາຍລະອຽດໃຫ້ຫລາຍເທົ່າທີ່ທ່ານສາມາດເອົາໃຫ້ໄດ້.

**ລາຍລະອຽດການຕິດຕໍ່ຂອງຜູ້ໄດ້ຮັບຜົນປະໂຍດຂອງ WA Cares**

| | | | |
|---|---|---|---|
| ຊື່ເຕັມ | ເລກໂທລະສັບ | ເລກ WA Cares ID | |
| ທີ່ຢູ່ຖະນົນ | ເມືອງ | ຣັດ | ຊິບໂຄດ |
| ທີ່ຢູ່ໄປສະນີ | ເມືອງ | ຣັດ | ຊິບໂຄດ |

**ລາຍລະອຽດການຕິດຕໍ່ຂອງຕົວແທນ**

| | | | |
|---|---|---|---|
| ຊື່ເຕັມ | | ເລກໂທລະສັບ | |
| ທີ່ຢູ່ຖະນົນ | ເມືອງ | ຣັດ | ຊິບໂຄດ |
| ທີ່ຢູ່ໄປສະນີ | ເມືອງ | ຣັດ | ຊິບໂຄດ |

**ລາຍລະອຽດການຕິດຕໍ່ຂອງຕົວແທນສຳລອງ (ຖ້າຖືກເລືອກເອົາ)**

| | | | |
|---|---|---|---|
| ຊື່ເຕັມ | | ເລກໂທລະສັບ | |
| ທີ່ຢູ່ຖະນົນ | ເມືອງ | ຣັດ | ຊິບໂຄດ |
| ທີ່ຢູ່ໄປສະນີ | ເມືອງ | ຣັດ | ຊິບໂຄດ |



Barcode Label Here